**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ**
**ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ເລກທີ 03 /ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 27 APR 2022

# ຄຳແນະນຳ
# ວ່າດ້ວຍການຂຶ້ນບັນຊີລາຍຊື່
# ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016.

**ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ອອກຄຳແນະນຳ ສະບັບນີ້:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຄຳແນະນຳ ສະບັບນີ້ ກຳນົດອອກເພື່ອເປັນການຜັນຂະຫຍາຍກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ການອາຍັດທຶນ ທີ່ມີສ່ວນພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແນໃສ່ກຳນົດ ຕົວບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ມີການເຄື່ອນໄຫວກະທຳຜິດ ດ້ວຍວິທີການຕ່າງໆທີ່ເປັນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນການແກ້ໄຂ ຕາມຄຳຮ້ອງຂໍ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນ ຫຼື ທຶນທີ່ໄດ້ຮັບຜົນກະທົບ ຈາກການກັກ, ການຍຶດ ຫຼື ການອາຍັດ ທີ່ມີສ່ວນພົວພັນກັບບັນຊີລາຍຊື່, ຕົວບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງກ່າວ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານຕ້ານການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນ ສປປ ລາວ ໃຫ້ໄດ້ຮັບຜົນດີ.

**ມາດຕາ 2 ການກະທຳທີ່ເປັນການກໍ່ການຮ້າຍ.**

ການກະທຳທີ່ເປັນການກໍ່ການຮ້າຍ ແມ່ນ ການກະທຳຂອງ ບຸກຄົນ, ກຸ່ມຄົນ, ການຈັດຕັ້ງ ຫຼື ອົງການກໍ່ການຮ້າຍ ໃນ ຫຼື ນອກດິນແດນ ຂອງ ສປປ ລາວ ທີ່ໄດ້ຮັບການສະໜອງທຶນໃຫ້ແກ່ການເຄື່ອນໄຫວກໍ່ການຮ້າຍ ມີ ດັ່ງນີ້:

1. ການກະທຳທີ່ ສ້າງຜົນສະທ້ອນຕໍ່ຄວາມໝັ້ນຄົງ, ພື້ນຖານເສດຖະກິດ-ສັງຄົມຂອງຊາດ, ອົງການຈັດຕັ້ງຕ່າງປະເທດ, ອົງການສາກົນ, ສ້າງຄວາມຫຍຸ້ງຍາກຕໍ່ການພົວພັນສາກົນຂອງ ສປປ ລາວ ຫຼື ສ້າງຄວາມວຸ້ນວາຍ, ໃຫ້ແກ່ປະຊາຊົນໃນສັງຄົມ.

2. ການກະທຳຮຸນແຮງ ທີ່ແຕະຕ້ອງເຖິງຊີວິດ, ສຸຂະພາບ, ສິດເສລີພາບ ຫຼື ການບັງຄັບ, ນາບຂູ່ທາງດ້ານຮ່າງກາຍ ແລະ ຈິດໃຈ.

3. ການຍຶດ, ທຳລາຍຊັບສິນ, ບຸກລຸກ, ໂຈມຕີ, ຂັດຂວາງ, ສ້າງຄວາມເສຍຫາຍ ແລະ ສ້າງຄວາມວຸ້ນວາຍໃຫ້ແກ່ລະບົບທາງຄອມພິວເຕີ, ລະບົບຄົມມະນາຄົມ, ລະບົບອິນເຕີເນັດ ຫຼື ເຄື່ອງມືດິຈິຕອນ ຂອງອົງການຈັດຕັ້ງລັດ, ນິຕິບຸກຄົນ ການຈັດຕັ້ງ ແລະ ບຸກຄົນ.

4. ການປຸງແຕ່ງ, ຜະລິດ, ນຳໃຊ້, ບັນຈຸ, ຂົນສົ່ງ, ຮິບໂຮມ, ຈັດຫາວັດຖຸລະເບີດ, ສານກຳມັນຕະພາບລັງສີ, ສານພິດ, ວັດຖຸໄວໄຟ ແລະ ຊື້-ຂາຍອາວຸດ, ອຸປະກອນ, ຍານພາຫະນະ ລວມທັງການແນະນຳ ໃຫ້ກະທຳການໃດໜຶ່ງ ໂດຍມີຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້.

5. ການເຜີຍແຜ່ ຊັກຊວນ, ຊຸກຍູ້, ບັງຄັບ, ນາບຂູ່, ວ່າຈ້າງ ຫຼື ສ້າງເງື່ອນໄຂ, ຊ່ວຍເຫຼືອ, ຊຸກຍູ້ ໃຫ້ມີການກະທຳຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3, 4, 7 ແລະ 8 ຂອງມາດຕານີ້.

6. ການຈັດຕັ້ງ, ໃຫ້ທຶນ, ເຂົ້າຮ່ວມ ແລະ ພະຍາຍາມເຂົ້າຮ່ວມການຈັດຕັ້ງ, ສິດສອນ, ຝຶກອົບຮົມ ຫຼື ຝຶກແອບ ເປົ້າໝາຍ ເພື່ອມີການກະທຳ ຕາມທີ່ກຳນົດໄວ້ໃນ ຂໍ້ 1, 2, 3, 4, 5, 7 ແລະ 8 ຂອງມາດຕານີ້;

7. ການຮັບຮູ້ການກະທຳທີ່ມີຫຼັກຖານຢັ້ງຢືນຢ່າງພາວະວິໄສ ວ່າເປັນການກໍ່ການຮ້າຍ;

8. ການກະທຳຜິດອື່ນ ທີ່ຖືວ່າເປັນການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ຫຼືສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

### ມາດຕາ 3 ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນການເຄື່ອນໄຫວ ໂດຍເຈດຕະນາທັງທາງກົງ ແລະ ທາງອ້ອມຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມໃຫ້, ຮິບໂຮມ, ຈັດຫາທຶນທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບການກໍ່ການຮ້າຍ ໂດຍສະເພາະ ເຖິງວ່າທຶນນັ້ນຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ເຂົ້າໃນການກະທຳຕົວຈິງກໍຕາມ.

## ໝວດທີ 2
## ການກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

### ມາດຕາ 4 ການກຳນົດບັນຊີລາຍຊື່

ການກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການກຳນົດບັນດາລາຍຊື່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ມີການເຄື່ອນໄຫວກະທຳຜິດ ດ້ວຍວິທີການຕ່າງໆ ທີ່ເປັນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງ.

### ມາດຕາ 5 ເງື່ອນໄຂການກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີພຶດຕິກຳສອດຄ່ອງກັບມາດຕາ 2, ມາດຕາ 3 ຂອງ ຄຳແນະນຳສະບັບນີ້ ຫຼື ມີແຫຼ່ງທີ່ມາ ຕາມທີ່ກຳນົດໄວ້ໃນຂໍ້ 3.1 ຂອງຄຳສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ນັ້ນ ຊຶ່ງວຽກງານນີ້ແມ່ນ ກະຊວງປ້ອງກັນຄວາມສະຫງົບ ຈະເປັນເຈົ້າການໃນການຄົ້ນຄວ້າ, ສັງລວມຂໍ້ມູນຫຼັກຖານ ແລະ

ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະເໜີຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພິຈາລະນາ ແລະ ກຳນົດເຂົ້າໃນບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນ ສປປ ລາວ ທັນທີ ຫຼື ຮ້ອງຂໍໄປຍັງລັດຕ່າງປະເທດ.

ກໍລະນີ ການຄົ້ນຄວ້າ ແລະ ການສັງລວມຂໍ້ມູນຫຼັກຖານ ຂອງກະຊວງປ້ອງກັນຄວາມສະຫງົບ ທີ່ສອດຄ່ອງກັບ ຂໍ້ 3.1.2 ຂອງຄຳສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລ້ວ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈະພິຈາລະນາ ຮັບຮອງ ທັນທີ ໂດຍບໍ່ຜ່ານການພິຈາລະນາ ຫຼືມີຄຳຕັດສິນຂອງສານ.

ພາຍຫຼັງ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮັບຮອງເອົາ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ເຂົ້າໃນບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ຮ້ອງຂໍໄປຍັງລັດຕ່າງປະເທດ ແລ້ວນັ້ນ ກະຊວງປ້ອງກັນຄວາມສະຫງົບ ຈະເປັນຜູ້ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ລວມທັງການແຈ້ງສິດ, ພັນທະ ແລະ ລາຍລະອຽດທຸກການຮ້ອງຂໍຕໍ່ຜູ້ຖືກກຳນົດບັນຊີລາຍຊື່ ພ້ອມທັງເຜີຍແຜ່ລົງເວັບໄຊສຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກະຊວງປ້ອງກັນຄວາມສະຫງົບ ຢ່າງປົກກະຕິ ແລະ ເປັນລະບົບ. ພ້ອມດຽວກັນນັ້ນ ສຳນັກງານຂໍ້ມູນຕ້ານການຟອກເງິນ ຕ້ອງແຈ້ງບັນຊີລາຍຊື່ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍທັນທີ ແລະ ກະຊວງປ້ອງກັນຄວາມສະຫງົບ ຕ້ອງເປັນຜູ້ແຈ້ງບັນຊີລາຍຊື່ດັ່ງກ່າວ ໄປຍັງວິສາຫະກິດໄປສະນີ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍທັນທີເຊັ່ນກັນ ພ້ອມທັງເຜີຍແຜ່ຜ່ານທາງເວັບໄຊສຂອງລັດຖະບານ ຫຼື ເວັບໄຊຂອງອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ.

**ມາດຕາ 6 ເງື່ອນໄຂການກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງລັດຕ່າງປະເທດຮ້ອງຂໍ ຫຼື ການຮ້ອງຂໍຂອງ ສປປ ລາວ ໄປຍັງລັດຕ່າງປະເທດ**

ການຮ້ອງຂໍຂອງລັດຕ່າງປະເທດ ຫຼື ການຮ້ອງຂໍໄປຍັງລັດຕ່າງປະເທດ ໃຫ້ກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໃຫ້ປະຕິບັດຕາມມາດຕາ 5 ຂອງ ຄຳແນະນຳສະບັບນີ້.

ກະຊວງການຕ່າງປະເທດ ເປັນຜູ້ປະສານງານຮອບດ້ານໃນການຮັບການຮ້ອງຂໍຂອງລັດຕ່າງປະເທດ ຫຼື ສົ່ງຄຳຮ້ອງຂໍຂອງ ສປປ ລາວ ໄປຍັງລັດຕ່າງປະເທດ ກ່ຽວກັບການກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## ໝວດທີ 3
## ການຮ້ອງຂໍຂອງຜູ້ຖືກຜົນກະທົບກັບການກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 7 ການຮ້ອງຂໍຂອງຜູ້ຖືກຜົນກະທົບ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຜົນກະທົບກັບການກຳນົດບັນຊີລາຍຊື່ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີສິດສະເໜີ ຫຼື ຮ້ອງຂໍ ໄປຍັງອົງການໄອຍະການປະຊາຊົນ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງຄຳແນະນຳສະບັບນີ້.

**ມາດຕາ 8 ການແກ້ໄຂລາຍຊື່ທີ່ຄ້າຍຄືກັນ**

ລາຍຊື່ທີ່ໃກ້ຄຽງ ແມ່ນລາຍຊື່ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄື ຫຼື ຄ້າຍຄືກັນ ກັບຜູ້ທີ່ຖືກກຳນົດເຂົ້າໃນບັນຊີລາຍຊື່ ຜູ້ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ທີ່ຫົວ

ໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ໄດ້ນຳໃຊ້ມາດຕະການເບື້ອງຕົ້ນໃນການ ຢຸດຕິ ຫຼື ກັກທຶນ ຕາມການແຈ້ງບັນຊີລາຍຊື່ຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກະຊວງປ້ອງກັນຄວາມສະຫງົບ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ນອກຈາກຈະດຳເນີນການຕາມຂໍ້ 5 ຂອງຄຳສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລ້ວ ຍັງຕ້ອງໄດ້ກວດສອບລາຍຊື່ພາຍໃນຂອງຕົນ ໂດຍການປຽບທຽບ ຊື່, ນາມສະກຸນ, ວັນ, ເດືອນ, ປີເກີດ ແລະ ເອກະສານຢັ້ງຢືນຕົວຕົນ ອື່ນໆ ຄືນ ເພື່ອລະບຸວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ບໍ່ໄດ້ມີສ່ວນກ່ຽວຂ້ອງກັບລາຍຊື່ທີ່ຖືກກຳນົດຢ່າງເປັນປົກກະຕິ.

ກໍລະນີ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ບໍ່ສາມາດລະບຸລາຍຊື່ຕາມວັກທີສອງຂອງມາດຕານີ້ ແມ່ນໃຫ້ປະສານຂໍຄວາມຊ່ວຍເຫຼືອໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກະຊວງປ້ອງກັນຄວາມສະຫງົບ ເພື່ອຢັ້ງຢືນຄວາມຖືກຕ້ອງ.

**ມາດຕາ 9 ການປົກປ້ອງ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ຈະບໍ່ມີຄວາມຮັບຜິດຊອບທຸກການກະທຳ ທີ່ປະຕິບັດໜ້າທີ່ ດ້ວຍຄວາມບໍລິສຸດໃຈ ແລະ ບໍ່ແມ່ນຍ້ອນຄວາມປະໝາດ ໃນການປະຕິບັດໜ້າທີ່ຂອງຕົນ ຫຼື ໄດ້ປະຕິບັດ ຕາມທີ່ກຳນົດໄວ້ໃນຂໍ້ 5 ຂອງຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ກາຍຮ້າຍ.

**ມາດຕາ 10 ການຮ້ອງຂໍກ່ຽວກັບທຶນທີ່ຖືກກັກ, ຍຶດ ແລະ ອາຍັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຜົນກະທົບຕໍ່ການກັກ, ການຍຶດ ແລະ ການອາຍັດ ທຶນ ມີສິດຮ້ອງຂໍ ໄປຍັງອົງການໄອຍະການປະຊາຊົນ ເພື່ອຂໍນຳໃຊ້ມາດຕະການໃດໜຶ່ງໃນການແກ້ໄຂ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຄຳແນະນຳສະບັບນີ້ ແລະ ຂໍ້ 6 ຂອງຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ການອາຍັດທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ກາຍຮ້າຍ.

**ມາດຕາ 11 ການພິຈາລະນາຄົ້ນຄວ້າຂໍ້ມູນຫຼັກຖານທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮ້ອງຂໍກ່ຽວກັບການຖືກກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຜົນກະທົບຕໍ່ກັບການກຳນົດບັນຊີລາຍຊື່ຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ຮ້ອງຂໍໄປຍັງ ອົງການໄອຍະການປະຊາຊົນ ເພື່ອຄົ້ນຄວ້າພິຈາລະນາພາຍໃນກຳນົດເວລາເຈັດວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ ເປັນຕົ້ນ ການພິສູດຫຼັກຖານ , ການທົດສອບຂໍ້ມູນຄືນໃໝ່, ການອອກຄຳສັ່ງຍຶດ ຫຼື ອາຍັດທຶນ ແລະ ອື່ນໆ.

ພາຍຫຼັງທີ່ ອົງການໄອຍະການປະຊາຊົນ ໄດ້ຄົ້ນຄ້ວາພິຈາລະນາ ແລ້ວ ຕ້ອງແຈ້ງຜົນຂອງການຄົ້ນຄ້ວາພິຈາລະນາ ຢ່າງເປັນລາຍລັກອັກສອນຂອງຕົນໃຫ້ເຈົ້າຂອງຄຳຮ້ອງຮັບຊາບ.

ກໍລະນີ ອົງການໄອຍະການປະຊາຊົນ ຫາກບໍ່ສາມາດແກ້ໄຂ ຫຼື ບໍ່ສາມາດຄົ້ນຄ້ວາພິຈາລະນາແກ້ໄຂໄດ້ພາຍໃນກຳນົດເວລາເຈັດວັນລັດຖະການ ນັ້ນ ເຈົ້າຂອງຄຳຮ້ອງ ມີສິດຮ້ອງຂໍໄປຍັງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອຄົ້ນຄ້ວາພິຈາລະນາແກ້ໄຂພາຍໃນກຳນົດເວລາສິບຫ້າວັນລັດຖະການ.

ສຳລັບການສະເໜີເອົາລາຍຊື່ເຂົ້າ-ອອກ ບັນຊີລາຍຊື່ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຕາມທີ່ກຳນົດໄວ້ໃນຂໍ້ 3.5 ຂອງຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນ

ໃຫ້ແກ່ການກໍ່ກາຍຮ້າຍ ໃຫ້ກະຊວງການຕ່າງປະເທດ ປະສານໄປຍັງຈຸດປະສານງານ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ເພື່ອພິຈາລະສະເໜີເອົາລາຍຊື່ຜູ້ກໍ່ການຮ້າຍຂຶ້ນໃນບັນຊີ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

### ມາດຕາ 12 ການຈັດຕັ້ງປະຕິບັດ

ມອບໃຫ້ ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 13 ຜົນສັກສິດ

ຄຳແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ**
**ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

ສອນໄຊ ສີພັນດອນ